# ເຄັດລັບສຳລັບຜູ້ລົງທຶນມືໃໝ່

# ລົງທຶນແນວໃດໃຫ້ໄດ້ກຳໄລ

ຫຼາຍຄົນມັກຈະຕັ້ງຄຳຖາມວ່າ ຖ້າຢາກຈະຫຼິ້ນຮຸ້ນຕ້ອງມີຫຍັງແດ່ຄຳຕອບສັ້ນໆກໍຄືຕ້ອງມີ "ເງິນ" ເປັນອັນດັບທຳອິດແຕ່ສິ່ງທີ່ສຳຄັນນອກເໜືອຈາກເງິນທີ່ເຮົາມີກໍ່ຄື : "ຄວາມຮູ້ ແລະ ຄວາມເຂົ້າໃຈທີ່ຖືກວິທີໃນການລົງທຶນ".

ຈາກປະສົບການທີ່ຢູ່ໃນທຸລະກິດຫຼັກຊັບມາແຕ່ປີ 2011 ສັງເກດເຫັນວ່າ ນັກລົງທຶນທີປະສົບຜົນສຳເລັດຈາກການຫຼິ້ນຮຸ້ນສ່ວນໃຫຍ່ຈະເປັນຜູ້ລົງທຶນທີ່ເຂົ້າມາຖືກຈັງຫວະໝາຍຄວາມວ່າ ເຂົ້າມາຊື້ຕອນລາຄາຖືກ ແລະຂາຍໃນລາຄາແພງເຊິ່ງທຸກຄົນກໍ່ຢາກຈະປະຕິບັດແບບນີ້ເພື່ອໃຫ້ໄດ້ກຳໄລ ແຕ່ບາງທີ່ເມື່ອເຂົ້າມາແລ້ວອາດຈະບໍ່ເປັນດັ່ງໃຈປະສົງ ເຊິ່ງໃນຫົວຂໍ້ນີ້ ຈຶ່ງໄດ້ຍົກເອົາເຄັດລັບເລັກໆນ້ອຍໆ ມາເປັນແນວທາງສຳລັບຜູ້ລົງທຶນມືໃຫມ່ທີ່ສົນໃຈທີ່ຈະລົງທຶນໃນຮຸ້ນ ເຊິ່ງເຄັດລັບ 5 ຂໍ້ດັ່ງກ່າວ ມີດັ່ງນີ້:

1. **ປ່ຽນຄຳວ່າ "ຫຼິ້ນຮຸ້ນ" ເປັນ "ລົງທຶນໃນຮຸ້ນ"**: ເຮົາຕ້ອງເຂົ້າໃຈວ່າ ຄວາມແຕກຕ່າງລະຫວ່າງ ຄຳວ່າ ຫຼິ້ນຮຸ້ນ ກັບລົງທຶນໃນຮຸ້ນນັ້ນຄື "ເປົ້າໝາຍ" ໃນການລົງທຶນ ເພາະຄຳວ່າ "ຫຼິ້ນຮຸ້ນ" ນັ້ນມັກ ຈະໝາຍເຖິງການເກງກຳໄລ ໃນໄລຍະສັ້ນ ເຊິ່ງຕ້ອງການກຳໄລຈາກສ່ວນຕ່າງຂອງລາຄາຮຸ້ນ. ແຕ່ "ການລົງທຶນໃນຮຸ້ນ" ຕ້ອງການຄວາມໝັ້ນຄົງ ໃນລະຍະຍາວໂດຍຄາດຫວັງຜົນຕອບແທນຈາກການເຕີບໂຕຂອງບໍລິສັດ ບໍ່ວ່າຈະເປັນເງິນປັນຜົນ ຫຼືມູນຄ່າຂອງຮຸ້ນໃນອານາຄົດ. ດັ່ງນັ້ນ, ສຳລັບຜູ້ລົງທຶນມືໃໝ່ ຄວນເລີ່ມຕົ້ນຕັ້ງເປົ້າໝາຍທີ່ການລົງທຶນໄລຍະຍາວເປັນລຳດັບທຳອິດ ຢ່າຄິດທີ່ຈະຊື້-ຂາຍຫຼິ້ນໆ ເພື່ອຫວັງເກັງກຳໄລເພາະສຸດທ້າຍແລ້ວມັກຈະຕ້ອງຜິດຫວັງເພາະລາຄາມັນອາດຈະບໍ່ຂຶ້ນລົງ ຫຼືໄປຕາມທິດທາງທີຄິດໄວ້.
2. **ຕ້ອງໃຊ້ເງິນ ເຢັນ ເທົ່ານັ້ນ** : ເງິນເຢັນ ຄືເງິນທີ່ເຮົາສາມາດເສຍໄປໂດຍທີ່ບໍ່ເດືອດຮ້ອນ ຫຼື ເວົ້າ ງ່າຍໆ ຄືເງິນທີ່ເສຍໄປກໍ່ບໍ່ເສຍດາຍ ເພາະການລົງທຶນໃນຮຸ້ນນັ້ນມີ "ຄວາມສ່ຽງ". ດັ່ງນັ້ນ, ຖ້າຫາກເຮົາເອົາເງິນທີ່ກ່ຽວຂ້ອງກັບການໃຊ້ "ຊີວິດ" ຫຼື "ເງິນໝູນວຽນ" ໄປສ່ຽງຄົງບໍ່ເປັນການດີ. ແຕ່ການໃຊ້ເງິນເຢັນກໍ່ບໍ່ໄດ້ແປວ່າບໍ່ສ່ຽງ ຈະເງິນຮ້ອນ ຫຼືເງິນເຢັນເງິນແບບໃດກໍ່ສ່ຽງທັງໝົດເມື່ອມາລົງທຶນໃນຮຸ້ນ. ແຕ່ຂໍ້ໄດ້ປຽບຂອງເງິນເຢັນແມ່ນເປັນເງິນທີ່ບໍ່ມີຜົນກະທົບຕໍ່ການໃຊ້ຊີວິດປະຈຳວັນແຕ່ມັນອາດຈະເຈັບໃຈເມື່ອຂາດທຶນ. ເພາະຫຼາຍຕົວຢ່າງທີ່ໄປຢືມເງິນມາຫຼິ້ນຮຸ້ນ ເງິນດັ່ງກ່າວມີຕົ້ນທຶນຂອງເງິນທຶນຕິດມາກໍ່ຄືດອກເບ້ຍ ຖ້າໃນກໍລະນີມີກຳໄລກໍ່ດີໄປແຕ່ໃນທາງກົງກັນຂ້າມຖ້າຫາກຂາດທຶນກໍ່ຄົງຕ້ອງຮັບພາລະໜັກທັງດອກເບ້ຍທີ່ຕິດມານຳ.
3. **ຮູ້ຈັກ ຮຸ້ນ ໃຫ້ດີສາກ່ອນ:** ຄຳວ່າຮູ້ຈັກຮຸ້ນໃຫ້ດີສາກ່ອນໝາຍຄວາມວ່າ ຜູ້ລົງທຶນຄວນ ຮູ້ວ່າຮຸ້ນທີ່ເຮົາເລືອກຈະລົງທຶນເປັນຮຸ້ນຫຍັງປະກອບທຸລະກິດຫຍັງ ມີຜົນການດຳເນີນງານຢ່າງໃດ, ມີການຈ່າຍເງິນປັນຜົນແບບໃດ ແລະ ຂໍ້ມູນຕ່າງໆບົດວິເຄາະ, ຂ່າວຜູ້ບໍລິຫານ ວິໄສທັດ ແລະອື່ນໆ ທີ່ເຮົາຄວນຮູ້. ຖ້າຖາມວ່າຄວນຮູ້ຫຼາຍປານໃດກໍຄົງຈະຕອບວ່າຮູ້ຫຼາຍເທົ່າໃດຍິ່ງດີ ຫຼັງຈາກນັ້ນແລ້ວຕ້ອງ ຄິດ, ວິເຄາະ ແລະ ຈຳແນກຂໍ້ມູນເພື່ອທີ່ຈະເຂົ້າໃຈ ແລະ ວາງແຜນການລົງທຶນໄດ້ຢ່າງຖືກຕ້ອງ.

**ຂໍ້ຜິດພາດໃຫຍ່ໆ** ທີ່ຜູ້ລົງທຶນມືໃໝ່ພົບນັ້ນກໍ່ຄື: ຮຸ້ນທີ່ໝູ່ແນະນຳ ຫຼືຂ່າວວ່າຮຸ້ນນີ້ດີແລ້ວຮີບຊື້ຖ້າເຮົາຊື້ໂດຍບໍ່ກວດສອບ ຫຼືບໍ່ຮູ້ມູນຄ່າທີ່ແທ້ຈິງຂອງຮຸ້ນວ່າແມ່ນເທົ່າໃດ ເພາະຢ້ານຮຸ້ນຂຶ້ນກ່ອນ ສ່ວນຫຼາຍຜູ້ລົງທຶນແບບນີ້ມັກຈະຊື້ຮຸ້ນໃນຕອນທີ່ລາຄາຮຸ້ນຂຶ້ນຂ້ອນຂ້າງສູງແລ້ວ "ລາຄາຢູ່ພູດອຍ"

4. **ຮູ້ຈັກ ຕົວເອງ ໃຫ້ດີກ່ອນ:** ຂໍ້ນີ້ສຳຄັນຫຼາຍເພາະກ່ອນທີ່ເຮົາຈະລົງທຶນເຮົາຕ້ອງຮູ້ຕົວເຮົາເອງສາກ່ອນວ່າເຮົາຮັບຄວາມສ່ຽງໄດ້ຫຼາຍສໍ່າໃດ ເພາະບາງຄົນຫຼິ້ນຮຸ້ນເພາະຫວັງແຕ່ກຳໄລ ແຕ່ຮັບຄວາມສ່ຽງບໍ່ໄດ້ ສຸດທ້າຍຕ້ອງມາເສຍໃຈ. ອີກຢ່າງທີ່ສຳຄັນ ແລະຕ້ອງທົບທວນຕະຫຼອດເວລານັ້ນຄື: ເປົ້າໝາຍທີ່ເຮົາຕ້ອງການໃນການລົງທຶນ(ກຳໄລຈັກ% ຍອມຮັບຂາດທຶນໄດ້ຈັກ%) ແລະ ຖາມຕົວເອງຢູ່ສະເໝີວ່າ ວິທີການ ແລະສິ່ງທີ່ເຮົາເຮັດໃນການລົງທຶນນັ້ນມັນເຮັດໃຫ້ເຮົາໄປເຖິງເປົ້າໝາຍໄດ້ຫຼືບໍ່.
5. **ຮັກສາຕົ້ນທຶນກ່ອນຄິດເຖິງ "ກຳໄລ" :** ວິທີການລົງທຶນທີ່ດີ ທີ່ສຸດຄື "ບໍ່ຂາດທຶນ" ຫຼາຍຄົນອາດຈະ ສົງໃສວ່າ ຖ້າຫຼິ້ນຮຸ້ນແລ້ວບໍ່ຫວັງກຳໄລຈະຫຼິ້ນເຮັດຫຍັງ. ແຕ່ຄວາມຫວັງທີ່ຢາກຈະໄດ້ກຳໄລສູງໆ ນັ້ນແຫຼະເຮັດໃຫ້ເຮົາເກີດຄວາມໂລບໃນການລົງທຶນຈົນບາງຄັ້ງມອງຂ້າມສິ່ງສຳຄັນຫຼາຍຢ່າງໄປ. ດັ່ງນັ້ນ, ໃນການຕັດສິນໃຈຊື້ຮຸ້ນທຸກຄັ້ງເຮົາຕ້ອງຖາມຕົວເອງສະເໝີວ່າເຮົາຈະຫຼຸດຄວາມສ່ຽງໃນການຂາດທຶນໃຫ້ຕໍ່າທີ່ສຸດໄດ້ແນວໃດ. ຢ່າລືມສຶກສາຂໍ້ມູນໃຫ້ດີເບິ່ງຄວາມສ່ຽງໃຫ້ເໝາະສົມກ່ອນທີ່ຈະຕັດສິນໃຈຊື້ ເພາະເຮົາຕ້ອງຖືຮຸ້ນໄປດົນ.

**ສຳຫຼັບ 5 ຂໍ້ທີ່ກ່າວມານີ້ ອາດຈະເປັນພຽງແນວທາງ ໃນການລົງທຶນສຳລັບມືໃໝ່ແຕ່ ສິ່ງທີ່ເຮົາຄວນກຽມພ້ອມກໍ່ຄືຄວາມຮູ້. ແຕ່ສິ່ງທີ່ຈະວັດແທກຄວາມຮູ້ຂອງເຮົາໃຊ້ໄດ້ຖືກ ຕ້ອງຫຼືບໍ່ກໍ່ຄື ປະສົບການ.**

**ແສງລາວີ ວົງສາວັນທອງ**
**ຮອງຫົວໜ້າພະແນກ ນາຍໜ້າຊື້-ຂາຍ ຫຼັກຊັບ**
**ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ**